ວາລະສານ

# ກະສິກຳ ແລະ ປ່າໄມ້

ປະຈຳ ອາທິດວັນທີ 09 ຫາ 13 ກັນຍາ 2024



ທ່ານລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ຕ້ອນຮັບການຢ້ຽມຢາມພົບປະ
ຂອງເອກອັກຄະຣາຊະທູດ ແຫ່ງ ຍີ່ປຸ່ນ ປະຈຳ ສປປ ລາວ

ຫ້ອງການກະຊວງກະສິກຳ ແລະ ປ່າໄມ້



# ທ່ານລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ຕ້ອນຮັບການຢ້ຽມຢາມພົບປະ ຂອງເອກອັກຄະຣາຊະທູດ ແຫ່ງ ຍີ່ປຸ່ນ ປະຈຳ ສປປ ລາວ

ພາບ-ຂ່າວໂດຍ: ພະແນກໂຄສະນາ ແລະ ຂ່າວສານ

ໃນວັນທີ 12 ກັນຍາ 2024 ນີ້ ທີ່ຫ້ອງຮັບແຂກ ຫ້ອງການຊວງກະສິກຳ ແລະ ປ່າໄມ້ ທ່ານ ລິນຄຳ ດວງສະຫວັນ ລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ໄດ້ຕ້ອນຮັບການຢ້ຽມຢາມພົບປະຂອງ ທ່ານ ໂຄອິຊຶມິ ຊືໂຕມຸ (Koizumi Tsutomu) ເອກອັກຄະຣາຊະທູດ ແຫ່ງ ຍີ່ປຸ່ນ ປະຈຳລາວ ພ້ອມດ້ວຍຄະນະ ເນື່ອງໃນໂອກາດການເຂົ້າຮັບຕຳແໜ່ງ ເປັນເອກອັກຄະຣາຊະທູດ ແຫ່ງ ຍີ່ປຸ່ນ ປະຈຳລາວ.

ໃນໂອກາດການພົບປະ ທັງສອງຝ່າຍໄດ້ແລກປ່ຽນ ແລະ ຫາລືກັນຫຼາຍດ້ານ ທີ່ຕິດພັນກັບວຽກງານການຮ່ວມມື ແລະ ສະໜັບສະໜູນຂອງລັດຖະບານຍີ່ປຸ່ນ ໂດຍສະເພາະໃນວຽກງານທີ່ຕິດພັນກັບຂົງເຂດກະສິກຳ ແລະ ປ່າໄມ້, ທ່ານ ເອກອັກຄະຣາຊະທູດໄດ້ກ່າວວ່າ ປັດຈຸບັນມີຫຼາຍບໍລິສັດຈາກປະເທດຍີ່ປຸ່ນ ມີຄວາມສົນໃຈຢາກມາລົງທຶນຮ່ວມກັບບໍລິສັດຂອງລາວດ້ານກະສິກຳ ແລະ ກະສິກຳສີຂຽວໃນປະເທດລາວ ແລະ ມີຫຼາຍບໍລິສັດທີ່ໄດ້ມາລົງທຶນແລ້ວໃນດ້ານການຜະລິດເປັນສິນຄ້າ ແລະ ສົ່ງອອກສິນຄ້າຈາກປະເທດລາວໄປປະເທດຍີ່ປຸ່ນເຊັ່ນ: ການຜະລິດເຫຼົ້າລາວດີ, ໂຄງການຜະລິດເມັດກາເຟຢູ່ຫຼວງພະບາງ, ທາງພາກໃຕ້ແມ່ນການຜະລິດສະໝຸນໄພ ແລະ ອື່ນໆ, ທ່ານ ລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ໄດ້ກ່າວວ່າຂ້າພະເຈົ້າສຸດແຕ່ມີຄວາມດີໃຈ ແລະ ຍິນດີ ທີ່ນັກລົງທຶນຈາກ

ປະເທດຍີ່ປຸ່ນ ແລະ ລັດຖະບານຍີ່ປຸ່ນ ມີຄວາມສົນໃຈການສະໜັບສະໜູນໃນດ້ານອຸດສາຫະກຳການປຸງແຕ່ງກະສິກຳອັນເປັນພື້ນຖານໃນປະເທດລາວເຮົາ, ພ້ອມທັງໄດ້ສະເໜີການສະໜັບສະໜູນຈາກລັດຖະບານຍີ່ປຸ່ນໃນດ້ານການແລກປ່ຽນຖ່າຍທອດບົດຮຽນກ່ຽວກັບການສ້າງນິຕິກຳດ້ານກະສິກຳໃຫ້ ສປປ ລາວ ເຊິ່ງເປັນສິ່ງທີ່ສຳຄັນໃນການລິເລີ່ມບັນດາໂຄງການຕ່າງໆ ພ້ອມທັງເຊື້ອເຊີນໃຫ້ທ່ານເອກອັກຄະຣາຊະທູດ ແລະ ຄູ່ຮ່ວມພັດທະນາໄດ້ລົງໄປຢ້ຽມຢາມພື້ນຖານການຜະລິດໃນປະເທດລາວໃນຕໍ່ໜ້າຕື່ມອີກ.



ຄະນະຮັບຜິດຊອບ:
ທ່ານ ສີປະໄພ ໄຊສິງຄານ
ທ່ານ ສີສະຫວາດ ທອມດາລາ

ບັນນາທິການ:
ທ່ານ ກິດຊະນະ ພົມມະຈັນ
ທ່ານ ໄຊລາ ສົມມະລາວົງ
ທ່ານ ນ. ທອງພຸດ ວົງພະຈັນ
ທ່ານ ນ. ຄຳແພງ ເກສອນ

ຈັດໜ້າອອກແບບໂດຍ:
ທ່ານ ນ. ສີອຳນອນ ໄຊຍະລາດ

ຕິດຕໍ່ ແລະ ລົງໂຄສະນາໄດ້ທີ່: ພະແນກໂຄສະນາ ແລະ ຂ່າວສານ, ຫ້ອງການກະຊວງ 021 410154;
website: www.maf.gov.la;
Facebook: ຂ່າວສານກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ;
Youtube: ລາຍການກະສິກຳ;ແລະ ປ່າໄມ້;